ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 0609 /ຫອຄ

ນະຄອນຫຼວງວຽງຈັນ, ວັນທີ 14 ມິຖຸນາ 2024

# ແຈ້ງການ

ເຖິງ: - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ

- ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ
- ວິສາຫະກິດທີ່ດຳເນີນກິດຈະການນຳເຂົ້າ ແລະ ສົ່ງອອກສິນຄ້າ ແລະ ການບໍລິການໃນຂອບເຂດທົ່ວປະເທດ

ເລື່ອງ: ສືບຕໍ່ການລົງທະບຽນ ຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ ແລະ ການບໍລິການ.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0634/ອຄ.ກຈພງ, ລົງວັນທີ 01 ກໍລະກົດ 2020;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການລົງທະບຽນຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ ເລກທີ 0752/ອຄ, ລົງວັນທີ 23 ພຶດສະພາ 2023.

ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດ ແຈ້ງມາຍັງ ທ່ານ ຊາບວ່າ ກົມການຄ້າຕ່າງປະເທດ ໄດ້ສຳເລັດການປັບປຸງລະບົບການລົງທະບຽນ ແລະ ຄຸ້ມຄອງຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ ແລະ ການບໍລິການ. ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ດັ່ງນີ້:

1. ເລີ່ມແຕ່ວັນທີ 18 ມິຖຸນາ 2024 ວິສາຫະກິດທີ່ດຳເນີນກິດຈະການນຳເຂົ້າ ແລະ ສົ່ງອອກສິນຄ້າ ແລະ ການບໍລິການ ສາມາດດຳເນີນການລົງທະບຽນເປັນຜູ້ນຳເຂົ້າ ແລະ ສົ່ງອອກ ສິນຄ້າ ແລະ ການບໍລິການ ໄດ້ເປັນປົກກະຕິ ໂດຍຜ່ານເວັບໄຊ້ https://imex-enterprise.laoconnect.la/.
2. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເນັ້ນໜັກແຈ້ງໃຫ້ຜູ້ທີ່ດຳເນີນກິດຈະການສົ່ງອອກສິນຄ້າກະສິກຳ (ໂດຍສະເພາະ ເຂົ້າກິນ, ກາເຟ, ຊາ, ມັນຕົ້ນ ແລະ ຢາງພາລາ) ແລະ ຜູ້ທີ່ດຳເນີນກິດຈະການດ້ານການບໍລິການ ເຊັ່ນ: ຂົນສົ່ງສາທົ່ນ, ປະກັນໄພ, ທ່ອງທ່ຽວ, ການໂຮງແຮມ, ການຄົມມະນາຄົມ (ໄປສະນີ, ໂທລະສັບ), ການກໍ່ສ້າງ, ທາງດ້ານການເງິນ, ຮັບຈ້າງການຜະລິດ ຫຼື ແປຮູບ, ຄ່າບໍລິການສ້ອມແປງ ແລະ ບຳລຸງຮັກສາຄ່າທຳນຽມການໃຊ້ຊັບສິນທາງປັນຍາ, ຄ່າບໍລິການດ້ານເຕັກນິກ, ທີ່ປຶກສາ ແລະ ຄ່າບໍລິການທຸລະກິດອື່ນໆມາລົງທະບຽນ.
3. ໃບຢັ້ງຢືນການລົງທະບຽນ ຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ ແລະ ການບໍລິການ ທີ່ອອກໃຫ້ນັບຕັ້ງແຕ່ວັນທີ 18 ມິຖຸນາ 2024 ແມ່ນຈະນຳໃຊ້ໃບຢັ້ງຢືນສະບັບປັບປຸງ (ຄັດຕິດມາພ້ອມນີ້) ຊຶ່ງຈະນຳໃຊ້ປ່ຽນແທນໃບຢັ້ງຢືນສະບັບເກົ່າ. ສຳລັບຜູ້ປະກອບການທີ່ໄດ້ລົງທະບຽນ ແລະ ໄດ້ຮັບໃບຢັ້ງຢືນແລ້ວ ແມ່ນສາມາດສືບຕໍ່ນຳໃຊ້ໃບຢັ້ງຢືນດັ່ງກ່າວໄດ້.
4. ວິສາຫະກິດທີ່ສຳເລັດການລົງທະບຽນແລ້ວ ຕ້ອງໄດ້ໄປພົວພັນກົມຄຸ້ມຄອງເງິນຕາຕ່າງປະເທດ, ທະນາຄານແຫ່ງ ສປປ ລາວ ພາຍໃນເວລາ 10 ວັນລັດຖະການ ຫຼັງຈາກທີ່ໄດ້ຮັບໃບຢັ້ງຢືນ ເພື່ອແຈ້ງຂໍ້ມູນກ່ຽວກັບ

ບັນຊີເງິນຝາກທີ່ຈະເປີດ ຫຼື ຫັນ ເປັນບັນຊີສະເພາະ ກ່ຽວກັບການນໍາເຂົ້າ ແລະ ສົ່ງອອກສິນຄ້າ ແລະ ການບໍລິການ ເພື່ອອອກ ໜັງສືຢັ້ງຢືນໄປແຈ້ງຕໍ່ທະນາຄານທຸລະກິດ.

5. ວິສາຫະກິດໃດທີ່ບໍ່ໄດ້ລົງທະບຽນນໍາກົມການຄ້າຕ່າງປະເທດ ແລະ ບໍ່ສໍາເລັດການເປີດ ຫຼື ຫັນບັນຊີສະເພາະ ກ່ຽວກັບການນໍາເຂົ້າ ແລະ ສົ່ງອອກສິນຄ້າ ແລະ ການບໍລິການ ຈະບໍ່ສາມາດດໍາເນີນທຸລະກໍາທາງການເງິນກັບທະນາຄານ ແລະ ບໍ່ສາມາດແຈ້ງດໍາເນີນການນໍາເຂົ້າ ແລະ ສົ່ງອອກສິນຄ້າ ແລະ ການບໍລິການໄດ້.

6. ມອບໃຫ້ ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງ, ຫ້ອງການຄຸ້ມຄອງເຂດເສດຖະກິດພິເສດ, ສະພາການຄ້າ ແລະ ອຸດສາຫະກໍາ ແລະ ທະນາຄານທຸລະກິດ ແຈ້ງໃຫ້ບັນດາວິສາຫະກິດທີ່ດໍາເນີນກິດຈະການນໍາເຂົ້າ ແລະ ສົ່ງອອກສິນຄ້າ ແລະ ການບໍລິການທີ່ຂຶ້ນກັບການຄຸ້ມຄອງຂອງແຂວງ, ນະຄອນຫຼວງ ດໍາເນີນການລົງທະບຽນໃຫ້ສໍາເລັດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຂອງແຈ້ງການສະບັບນີ້ດ້ວຍ.

ຫົວໜ້າຫ້ອງການ

ກະຊວງອຸດສາຫະກໍາ ແລະ ການຄ້າ
ຫ້ອງການ

ປອ. ບົວວັນ ວິລະວົງ